ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ

# ການເຄື່ອນວຽກງານຂໍ້ມູນຂ່າວສານສິນເຊື່ອ

ປະຈຸບັນ, ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວໄດ້ມີສະມາຊິກທັງໝົດ 195 ແຫ່ງ ທະນາຄານທຸລະກິດ (39 ແຫ່ງ) ສະຖາບັນການເງິນຈຸລະພາກທີຮັບເງິນຝາກ (ສກຈຮ). (14 ແຫ່ງ) ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ). (22 ແຫ່ງ) ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ (ສກຈບ). (90 ແຫ່ງ) ບໍລິສັດເຊົ່າສິນເຊື່ອ. (26 ແຫ່ງ) ການຈັດຕັ້ງອື່ນໆ ແລະ ນິຕິບຸກຄົນ. (03 ແຫ່ງ).

ໃນລະຫວ່າງວັນທີ 22 ມີນາ - 11 ເມສາ 2023 ບໍລິສັດ ຂສລໄດ້ລົງເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອຢູ່ຂອບເຂດນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ທີ່ເປັນສະມາຊິກຂອງບໍລິສັດ ຂສລ ຈຳນວນ 09 ແຫ່ງ ຄື: ສກຈບ ຢູ່ນ່ຽນລາວ, ສກຈບ ອຸດົມເອກ, ສກຈບ ວີພີ, ສກຈບ ທະວີໂຊກ, ສກຈບ ວາລີລັກ, ສກຈຮ ໂຊກໄຊ, ສກຈບ ນະຄອນຫຼວງອາຊຽນ, ສກຈບ ປັນຍາພອນ ແລະ ບໍລິສັດ ຈີແອວ ເຊົ່າສິນເຊື່ອ. ເຊິ່ງ ບໍລິສັດ ຂສລ ກໍໄດ້ນຳສະເໜີຄວາມໝາຍຄວາມສຳຄັນຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ, ບັນດາລະບຽບການທີ່ຕິດພັນ, ຮູບແບບການເກັບກຳຂໍ້ມູນ, ການນຳໃຊ້ລະບົບຂໍ້ມູນຂ່າວສານສິນເຊື່ອ ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈຕໍ່ກັບວຽກງານ ແລະ ສາມາດນຳໃຊ້ຂໍ້ມູນຂ່າວສານສິນເຊື່ອເຂົ້າໃນວຽກ





ງານຂອງຕົນໄດ້ຢ່າງມີປະສິທິພາບ ປະສິດທິຜົນ ພ້ອມທັງປະຕິບັດໜ້າທີ່ໃນການນຳສົ່ງຂໍ້ມູນເຂົ້າສູ່ລະບົບຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່ບໍລິສັດ ຂສລ ຢ່າງເປັນປົກກະຕິ.






ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ດຳເນີນທຸລະກິດຕາມຂອບເຂດສິດທີ່ກຳນົດໄວ້ໃນການສະໜອງຂໍ້ມູນຂ່າວສານສິນເຊື່ອ, ສ້າງຜະລິດຕະພັນທີ່ມີຄຸນນະ ພາບ, ມາດຕະຖານສາກົນ ມີຄວາມທັນສະໄໝຮັບປະກັນຄວາມປອດໄພດ້ານຂໍ້ມູນ ກ້າວໄປສູ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນອານາຄົດ. ປະກອບສ່ວນເຂົ້າໃນການກຳນົດນະໂຍບາຍເງິນຕາຂອງພາກລັດ ແນ່ໃສ່ຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ, ຄຸ້ມຄອງສະຖາບັນການເງິນ ໃຫ້ສະມາຊິກສາມາດເຂົ້າເຖິງແຫຼ່ງຂໍ້ມູນ ແລະ ນຳໃຊ້ຂໍ້ມູນເຂົ້າໃນການວິເຄາະຄວາມສ່ຽງດ້ານສິນເຊື່ອກ່ອນການອະນຸມັດເງິນກູ້, ການທົບທວນລູກຄ້າ, ປັບໂຄງສ້າງໜີ້, ແຈ້ງເຕືອນເງິນກູ້ທີ່ມີຄວາມສ່ຽງ, ກຳນົດສ້າງຜະລິດຕະພັນ ແລະ ການຕະຫລາດ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສະຫະກິດຂະໜາດນ້ອຍ ແລະ ກາງ ພ້ອມທັງເຮັດໃຫ້ສັງຄົມສາມາດເຂົ້າເຖິງຂໍ້ມູນຂ່າວສານສິນເຊື່ອໄດ້ງ່າຍຂື້ນ.

ພ້ອມດຽວກັນນັ້ນ, ກໍໄດ້ມີພິທີມອບ-ຮັບສະມາຊິກໃໝ່ ຂອງ ບໍລິສັດ ຂສລ ກໍຄື ສກຈບ ຢູນ່ຽນລາວ, ສກຈບ ອຸດົມເອກ, ສກຈບ ວີພີ, ສກຈບ ທະວີໂຊກ, ສກຈບ ວາລີລັກ ພ້ອມທັງເຜີຍແຜ່, ຝຶກອົບຮົມ, ແນະນຳ ກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່ສະມາຊິກໃໝ່ດັ່ງກ່າວ ໂດຍການນຳພາຂອງທ່ານ ນ. ເພັດລຳພອນ ຄຳນໍເພັດ ຮອງຜູ້ອຳນວຍການໃຫຍ່ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພ້ອມດ້ວຍຄະນະ.












#ພາບ-ຂ່າວ: ພະແນກກວດກາ ແລະ ແກ້ໄຂຂໍ້ມູນ